Australian Government

Australian Centre for International Agricultural Research

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມໃນ ການຂະຫຍາຍ ການລ້ຽງສັດໃນ ເຂດພາກເໜືອ ຂອງ ສປປ ລາວ



***ການທອມງົວມີລາຍຮັບທີ່ດີ***

ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ສ ປ ປ ລາວ

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ກ.ສ.ກ.ປ NAFES

Charles Sturt University INSTITUTE FOR LAND, WATER AND SOCIETY

ທ້າວ ຍົງເນັ້ງທໍ່, ອາຍຸ 40 ປີ, ຊົນເຜົ່າມົ້ງ ເປັນຊາວກະສິກອນ ຢູ່ບ້ານສັນຄົງ, ເມືອງຄູນ, ແຂວງຊຽງຂວາງ, ອາຊີບຕົ້ນຕໍແມ່ນ ລ້ຽງສັດໃຫຍ່ ແລະ ລາຍຮັບຂອງຄອບຄົວໄດ້ຈາກ ການຂາຍສັດ. ໃນປັດຈຸບັນຖານະຄອບຄົວແມ່ນພໍກິນ ຄອບຄົວຂອງລາວທັງໝົດມີ 9 ຄົນ, ຍິງ 5 ຄົນ ໃນນັ້ນມີແຮງງານຕົ້ນຕໍ 3 ຄົນ.

## *ການລ້ຽງງົວຂອງລາວໃນເມື່ອກ່ອນ.*

ວິທີລ້ຽງງົວຂອງລາວໃນໄລຍະຜ່ານມາ ລ້ຽງປ່ອຍຕາມທຳມະຊາດ(ບໍ່ມີການຄຸ້ມຄອງສັດ, ການຈັດການ) ການລ້ຽງສັດຂອງລາວ ກໍ່ພົບຄວາມຫຍຸ້ງຍາກ ແລະ ມີບັນຫາຫຼາຍຢ່າງ ເປັນຕົ້ນແມ່ນ ຫຍ້າທຳມະຊາດບໍ່ພຽງພໍ: ງົວເປັນພະຍາດ, ງົວຈ່ອຍ, ຕົກເຫວ, ຄົນ ລັກ, ໄປຊອກງົວໄກ, ເວລາງົວເຈັບ ຫຼື ເກີດລູກໃໝ່ໄດ້ ໄປກ່ຽວເອົາຫຍ້າທຳມະຊາດໄກໃຊ້ເວລາ 3 ຊົ່ວໂມງ. ເມື່ອເຫັນ ບັນຫາດັ່ງກ່າວ ລາວຈິ່ງໄດ້ຂາຍງົວອອກ.

## *ການທົດລອງປູກພືດອາຫານສັດ*

ຕໍ່ກັບບັນຫາ ຂອງລາວນັ້ນ ມາໃນປີ 2006 ໂຄງການກໍ່ສ້າງບຸກ ຄະລາກອນ ເພື່ອພັດທະນາ ລະບົບ ການ ລ້ຽງສັດ ລະດັບຄອບຄົວ ເຂົ້າມາຈັດຕັ້ງປະຕິບັດການປູກຫຍ້າເພື່ອລ້ຽງສັດ. ລາວກໍ່ແມ່ນ ຄອບຄົວໜຶ່ງທີ່ເຂົ້າຮ່ວມ ໃນກິດຈະກຳດັ່ງກ່າວ ລາວໄດ້ປູກຫຍ້າ 4 ຊະນິດຄື: ກິນີ, ມູລາໂຕ, ຣູຊີ, ບຣີເຊັນຕາ ໃນເນື້ອ 2,3 ຮຕ ລາວຍັງໄດ້ຮັບຄຳແນະນຳ ວິທີການປູກ ຈາກນັກວິຊາການ ເມືອງ ໂດຍໄດ້ກຽມດິນລະອຽດ ແລະ ໃຊ້ໄມ້ຂີດເປັນຮ່ອງຕັດຕາມຄ້ອຍຊັນ ແຕ່ລະແຖວຫ່າງກັນ 40 - 50 ຊັງຕີແມັດ ແລະ ຮ່ອງເລິກປະມານ 2 - 3 ຊັງຕີແມັດ ຫວ່ານແກ່ນພັນພືດລົງໃສ່ ຫຼັງຈາກນັ້ນກໍເອົາດິນຖົມເບົາໆ ເມື່ອປູກໄດ້ 45 ວັນ ຫຍ້າທີ່ປູກກໍ່ມີການຈະເລີນເຕີບໂຕ ແລະ ສາມາດຕັດມາໃຫ້ງົວກິນໄດ້ ທຳອິດ ລາວນຳມາຈາກ ຝູງສັດຂອງລາວ 1 ໂຕ ມາລ້ຽງຂັງແລ້ວໃຊ້ຫຍ້າທີ່ປູກໃຫ້ກິນ ລາວສັງເກດເຫັນວ່າ ຮູບຮ່າງງົວມີການປ່ຽນແປງຄື: ຕຸ້ຍພີ, ແຂງແຮງ ແລະ ງາມກວ່າເກົ່າ ຕາງຈາກໂຕທີ່ປ່ອຍຕາມທຳມະຊາດ ທັ້ງໆທີ່ງົວລຸ້ນດຽວກັນ. ລາວລ້ຽງທອມ ໄດ້ 3 ເດືອນ ລາວໄດ້ຂາຍງົວອອກໃນລາຄາ 3,900,000 ກີບ ລາວດີໃຈເມື່ອເຫັນງົວໄດ້ລາຄາດີ ລາວເວົ້າວ່າ: ຖ້າລ້ຽງປ່ອຍຕາມທຳມະຊາດ ງົວໂຕນີ້ຂາຍໄດ້ພຽງ 3,000,000 ກີບ ເທົ່ານັ້ນ, ລາວຍັງເວົ້າ ວ່າຖ້າປູກຫຍ້າ ໃຫ້ຫຼາຍກວ່ານີ້ ຈະສາມາດລ້ຽງຫຼາຍໂຕ, ດັ່ງນັ້ນ ລາວຈິ່ງແປງຄອກຍົກພື້ນ ຈຳນວນ 4 ຄອກ ພ້ອມດ້ວຍ ຮາງນ້ຳ ແລະ ຮາງອາຫານ, ລາວສືບຕໍ່ລ້ຽງ ໂດຍການຊື້ສັດຈາກບ່ອນອື່ນ ມາລ້ຽງແບບ



ເກົ່າ ລາວລ້ຽງປີລະ 2 ຊຸດ, ຊຸດລະ 7 ໂຕ ມາຮອດປະຈຸບັນນີ້ລາວຂາຍໄປ ແລ້ວ 1 ຊຸດ ໄດ້ເງິນ ທັງໝົດ 21,000,000 ກີບ.

### *ການລ້ຽງສັດຂອງລາວໃນປັດຈຸບັນ.*

ຫຼັງຈາກລາວໄດ້ປູກພືດອາຫານສັດ ລາວກໍ່ມີວິທີປັບປຸງການລ້ຽງສັດຂອງລາວ ຈາກການລ້ຽງປ່ອຍຕາມທຳມະຊາດ ຫັນມາລ້ຽງແບບມີ ການຈັດການ, ໃກ້ສິດ, ຕິດຕາມ ຄື: ທຸກໆຕອນແລງຕ້ອງນຳເອົາງົວມາແຫຼ່ງໃນຄອກ ແລະ ໃຊ້ພືດອຫານສັດ ທີ່ເປັນອາຫານເສີມບາງເລັກນ້ອຍ ສ່ວນສັດທີ່ທອມຂາຍແມ່ນເອົາໃຈໃສ່ພິເສດ.

### *ວິທີໃຫ້ອາຫານໃນຕອນທຳອິດ*

ພືດອາຫານສັດທີ່ປູກ( ກີນີ, ບຣີເຊັນຕາ, ມູລາໂຕ, ຣູຊີ) ປະສົມ ກັບຫຍ້າທຳມະຊາດໃຫ້ກິນຕອນເຊົ້າ.

### *ວິທີໃຫ້ອາຫານໃນປັດຈຸບັນສຳລັບສັດທອມຂາຍ*



ເຫັນວ່າງົວຂອງລາວກິນຫຍ້າໄດ້ດີ ແລະ ມີຮູບຮ່າງປ່ຽນແປງ. ຕໍ່ມາລາວໄດ້ຮັບຄຳແນະນຳຈາກ ນັກວິຊາການ ແລະ ລາວກໍໄດ້ໄປທັດສະນະສຶກສາ ທີ່ ເມືອງໜອງແຮດອີກ, ລາວຈຶ່ງໄດ້ນຳໃຊ້ບົດຮຽນທີ່ມີນັ້ນມາປະຕິບັດຕົວຈິງໃນການໃຫ້ອາຫານງົວຄື:

- ຫຍ້າສົດ 2 ເປ້ = 30 ກິໂລ / 3 ຄາບ / ມື້ (ເຊົ້າ, ສວຍ, ແລງ) /1ໂຕ.
- ຮຳ 1 ຖ້ວຍປະມານ.
- ສາລີ ແລະ ອ້ອຍຕາມທີ່ມີ.

ນອກນັ້ນລາວຍັງໄດ້ເອົານ້ຳໃຫ້ງົວກິນຕະຫຼອດ. ປັດຈຸບັນນີ້ລາວໄດ້ທອມງົວ 7 ໂຕ ໂດຍເອົາ ອາຫານທີ່ກ່າວມານັ້ນໃຫ້ງົວກິນ.

- ການຮັກສາສຸຂະພາບງົວ.
- ລາວໄດ້ສັກຢາປ້ອງກັນພະຍາດ ເຕົ້າໂຮມເລືອດ ງົວ - ຄວາຍ.

### ການແກ້ໄຂບັນຫາໄດ້ ແລະ ມີຜົນປະໂຫຍດຄື:

- ບໍ່ໄດ້ໄປຊອກຫຍ້າອາຫານສັດ ແລະ ງົວ ໄກ.
-ງົວຈະເລີນເຕີບໂຕໄວກ່ວາເກົ່າພຽງ 3 ເດືອນ ກໍ່ໄດ້ຂາຍ.
-ບໍ່ເສັຍເວລາໄປຊອກຫຍ້າທຳມະຊາດ, ມີເວລາໄປວຽກອື່ນ.
-ມີສວນພືດອາຫານສັດເປັນຂອງຕົນເອງ ແລະ ຢູ່ໃກ້ເຮືອນ.
-ງົວມີການຈະເລີນເຕີບໂຕໄວ, ຂາຍອອກໃນລາຄາດີ ໃຊ້ເວລາທອມພຽງ 3 ເດືອນ ກໍສາມາດຂາຍໄດ້ກຳໄລ ປະມານ 2,000,000 ກີບ/ 2ໂຕ/ ຊຸດ.
-ຮູ້ວິທີຮັກສາສຸຂະພາບສັດ ແລະ ລະບົບການລ້ຽງສັດ ເຊັ່ນ: ສັກຢາປ້ອງກັນພະຍາດສັດ, ຂ້າແມ່ທ້ອງ, ສ້າງຄອກ, ຮາງນ້ຳ, ຮາງອາຫານ
-ມີຄວາມສາມາດ ນຳເອົາບົດຮຽນຂອງຕົນເອງ ໄປອະທິບາຍໃຫ້ຜູ້ອື່ນໄດ້. ລາວຍັງເວົ້າອີກວ່າຕໍ່ໄປນີ້ລາວຈະເອົາການທອມງົວເປັນກິດຈະກຳຫຼັກເພາະວ່າໃຊ້ເວລາສັ້ນແຕ່ຄຸ້ມຄ່າກັບການລົງທຶນ.
-ເງິນທີ່ໄດ້ ລາວຊື້ເຄື່ອງໃຊ້ໃນເຮືອນ, ສົ່ງລູກເຂົ້າໂຮງ



ຮຽນ, ແລະ ຊື້ສັດຕື່ມ.

### *ຄວາມຫວັງ ແລະ ແຜນໃນຕໍ່ໜ້າ.*

-ໃນຕໍ່ໜ້າ ຈະຂະຫຍາຍສວນພືດອາຫານສັດອອກ ຕື່ມ ເທົ່າທີ່ຈະເຮັດໄດ້ ເພື່ອສາມາດທອມງົວໃຫ້ໄດ້ 8 - 10 ໂຕ/ຊຸດ.
- ຈະທອມສັດຂາຍເປັນສິນຄ້າ.
- ຈະລ້ຽງສັດ (ງົວ) ເປັນຫຼັກ ແລະ ຈະລ້ຽງໝູຕື່ມອີກ.

*ຂຽນໂດຍ: ທ່ານ ພັດພິລົມ ພະນັກງານ*
*ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຄູນ*
*ແຂວງ ຊຽງຂວາງ. ໂທລະສັບ: 020:5855784*